# ບົດສັງເຂບດ້ານນະໂຍບາຍ
# ການແກ້ໄຂຜົນກະທົບຈາກການສິ້ນສຸດໂກຕ້າ ສຳລັບການສົ່ງອອກ ແລະ ນຳເຂົ້າ ຜະລິດຕະພັນ ແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ຕໍ່ ສປປ ລາວ



## ການສຶກສາຜົນກະທົບດ້ານການພັດທະນາມະນຸດ ໃນ ສປປ ລາວ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ

*ໃນທົດສະວັດທີ່ຜ່ານມາ, ອຸດສາຫະກຳຕັດຫຍິບລາວ ໄດ້ປະກອບສ່ວນສູງ ຕໍ່ລະບົບເສດຖະກິດ ທັງໃນດ້ານການສ້າງລາຍຮັບເງິນຕາຕ່າງປະເທດ ແລະ ກາລະໂອກາດສ້າງວຽກເຮັດງານທຳ. ອຸດສາຫະກຳຕັດຫຍິບລາວ ໄດ້ເລີ່ມກໍ່ຕົວ ໃນຕົ້ນທົດສະວັດ 1990 ແລະ ຕັ້ງແຕ່ນັ້ນມາ ການສົ່ງອອກເຄື່ອງຕັດຫຍິບ ໄດ້ເພີ່ມຂຶ້ນຢ່າງສະໝໍ່າສະເໝີ. ນັບແຕ່ປີ 2000 ເປັນຕົ້ນມາ, ຈຳນວນໂຮງງານສົ່ງອອກເຄື່ອງຕັດຫຍິບ ໄດ້ເພີ່ມຂຶ້ນຈາກ 53 ເປັນ 59 ໂຮງງານ ໃນປີ 2006. ມູນຄ່າການສົ່ງອອກເພີ່ມຂຶ້ນ 24% ໃນປີ 2000 ສົມທຽບກັບປີ 1995 ແລະ ເພີ່ມຂຶ້ນ 32% ໃນປີ 2005 ສົມທຽບກັບປີ 2000. ເຖິງຢ່າງໃດກໍ່ຕາມ, ມູນຄ່າດັ່ງກ່າວ ໄດ້ຫຼຸດລົງຫຼາຍ ໃນປີ 1996 ເນື່ອງຈາກມີການຢຸດຕິການໃຫ້ສິດທິພິເສດທາງການຄ້າ (GSP) ຍ້ອນມີການລະເມີດລະບຽບແຫຼ່ງກຳເນີດສິນຄ້າ (ROO). ໃນປີ 2001 ແລະ 2002, ການສົ່ງອອກຂອງຂະແໜງຕັດຫຍິບຫຼຸດລົງຕື່ມອີກ ແຕ່ວ່າໄດ້ຟື້ນຕົວຄືນ ນັບແຕ່ສາມາດເຈລະຈາຜ່ອນຜັນການໄດ້ຮັບສິດທິພິເສດ.*

### ການປະກອບສ່ວນຂອງການສົ່ງອອກເຄື່ອງຕັດຫຍິບ ຕໍ່ລະບົບເສດຖະກິດ ແລະ ການພັດທະນາມະນຸດ

ໃນປີ 2005, ການປະກອບສ່ວນຂອງຂະແໜງຕັດຫຍິບ ຕໍ່ກັບລາຍຮັບແຫ່ງຊາດ ເປັນມູນຄ່າ 143.2 ລ້ານໂດລາອາເມລິກາ. ຂະແໜງຕັດຫຍິບ ໄດ້ສ້າງວຽກງານທຳແກ່ຫຼາຍພັນຄົນ ໂດຍສະເພາະ ແມ່ຍິງຈາກຊົນນະບົດ ແລະ ຕົວເມືອງ ຊຶ່ງມີແຮງງານຍິງກວມເອົາປະມານ 80% ຂອງກຳລັງແຮງງານ. ຈຳນວນກຳມະກອນໂດຍລວມໄດ້ເພີ່ມຂຶ້ນ ນັບແຕ່ຕົ້ນທົດສະວັດ 1990 ເປັນຕົ້ນມາ; ມີກຳມະກອນ 28,000 ຄົນ ໃນອຸດສາຫະກຳຕັດຫຍິບໃນປີ 2006 ຊຶ່ງເພີ່ມຂຶ້ນເທົ່າຕົວ ສົມທຽບກັບປີ 1993. ເນື່ອງຈາກກຳລັງແຮງງານສ່ວນໃຫຍ່ ຢູ່ໃນອຸດສາຫະກຳຕັດຫຍິບ, ຂະແໜງອຸດສາຫະກຳດັ່ງກ່າວ ບໍ່ພຽງແຕ່ສ້າງຜົນປະໂຫຍດໃຫ້ແກ່ກຳມະກອນ ແຕ່ຍັງນຳເອົາຜົນກະທົບທາງບວກຕໍ່ເສດຖະກິດທ້ອງຖິ່ນ. ຍ້ອນການສ້າງວຽກເຮັດງານທຳ, ອຸດສາຫະກຳນີ້ ໄດ້ຍົກລະດັບຄວາມເຂັ້ມແຂງໃຫ້ແມ່ຍິງ, ສ້າງລາຍຮັບ ແລະ ຄວາມເປັນເອກະພາບໃນການພົວພັນສັງຄົມຂອງບັນດາກຳມະກອນ ແລະ ຍົກລະດັບການພັດທະນາ ສີມືແຮງງານ ແລະ ຄວາມຮູ້ຄວາມສາມາດໂດຍກົງ. ຍ້ອນມີການພັດທະນາເຫຼົ່ານີ້, ຈຶ່ງເຮັດໃຫ້ມາດຕະຖານການດຳລົງຊີວິດ ໄດ້ຮັບການປັບປຸງໃນບ້ານຂອງກຳມະກອນ ຊຶ່ງປະກອບສ່ວນໂດຍກົງ ຕໍ່ການຫຼຸດຜ່ອນຄວາມທຸກຍາກ.

### ຄວາມສາມາດແຂ່ງຂັນໃນສາກົນຕໍ່ການສົ່ງອອກເຄື່ອງຕັດຫຍິບລາວ

ເຫັນໄດ້ວ່າ ເຄື່ອງຕັດຫຍິບສົ່ງອອກຂອງລາວ ມີຄວາມສາມາດແຂ່ງຂັນທີ່ຕໍ່າກວ່າສິນຄ້າສົ່ງອອກຂອງຄູ່ແຂ່ງ ໃນປະເທດເພື່ອນບ້ານ ເຊັ່ນ: ໄທ, ຫວຽດນາມ ແລະ ຈີນ ແລະ ປະເທດກຳລັງພັດທະນາອື່ນໆ ເຊັ່ນ: ອິນເດຍ ແລະ ບັງກະລາເທດ. ຄວາມສາມາດແຂ່ງຂັນໃນສາກົນຂອງເຄື່ອງຕັດຫຍິບສົ່ງອອກລາວ ຕົ້ນຕໍແມ່ນອາໄສຕົ້ນທຶນແຮງງານ, ຜະລິດຕະພາບ ແລະ ເວລາຈັດສົ່ງ.

*ຕົ້ນທຶນແຮງງານ:* ຕົ້ນທຶນແຮງງານຕໍ່າ ມັກຖືກອ້າງວ່າແມ່ນໜຶ່ງໃນຄວາມໄດ້ປຽບໂດຍສົມທຽບໃນການແຂ່ງຂັນຂອງຜູ້ຜະລິດໃນປະເທດດ້ອຍພັດທະນາ. ສ ປ ປ ລາວ ເປັນໜຶ່ງບັນດາປະເທດທີ່ມີຄ່າແຮງຕໍ່າສຸດໃນບັນດາປະເທດຜູ້ຜະລິດໃນອາຊີ ແຕ່ວ່າ ຄ່າແຮງທີ່ຖືກ ຊໍ້າພັດບໍ່ໄດ້ສະແດງໃຫ້ເຫັນເຖິງ ຄວາມສາມາດແຂ່ງຂັນຍ້ອນວ່າຈຳເປັນຕ້ອງໄດ້ພິຈາລະນາເຖິງ ລະດັບຜະລິດຕະພາບເຊັ່ນກັນ.

ຜົນການສຳຫຼວດ ສະແດງໃຫ້ເຫັນວ່າ 57% ຂອງຜູ້ຖືກສອບຖາມໄດ້ລົງທຶນໃນອຸດສາຫະກຳຕັດຫຍິບລາວ ຍ້ອນເຫດຜົນຈາກຕົ້ນທຶນຄ່າແຮງຕໍ່າ. ຄ່າແຮງຕໍ່ຊົ່ວໂມງຂອງກຳມະກອນຕັດຫຍິບລາວແມ່ນຕໍ່າກວ່າໃນປະເທດເພື່ອນບ້ານ ເຊັ່ນ ກຳປູເຈຍ, ຈີນ ແລະ ອື່ນໆ ເຊັ່ນ ບັງກະລາເທດ ແລະອິນເດຍ. ຄ່າແຮງຕໍ່ຊົ່ວໂມງແມ່ນ 0.125 ໂດລາອາເມລິກາ ໃນຂະນະທີ່ຄ່າແຮງຂອງຈີນ ແມ່ນຢູ່



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

ລະຫວ່າງ 0.68-0.88 ໂດລາອາເມລິກາ. ຄ່າແຮງຕໍ່າສຸດ ທີ່ເປັນທາງການ ແມ່ນປະມານ 26 ໂດລາອາເມລິກາ ຕໍ່ເດືອນ.

*ຜະລິດຕະພາບຂອງແຮງງານ ແລະ ເງິນທຶນ:* ຜະລິດຕະພາບຂອງແຮງງານ ຂອງອຸດສາຫະກຳຕັດຫຍິບລາວ ແມ່ນຕໍ່າກວ່າ ໃນປະເທດເພື່ອນບ້ານ ແລະ ປະເທດຜູ້ສົ່ງອອກ ທີ່ເປັນປະເທດດ້ອຍພັດທະນາ ແລະກຳລັງພັດ ທະນາອື່ນໆ. ຕົວຢ່າງ ກຳມະກອນຕັດຫຍິບລາວ ໂດຍສະເລ່ຍຜະລິດໄດ້ 1,350 ຜືນ ຕໍ່ປີ ສົມທຽບກັບກຳມະ ກອນຈີນ ຊຶ່ງຜະລິດໄດ້ ໂດຍສະເລ່ຍ 7,500 ຜືນ. ຜະລິດຕະພາບທີ່ຕໍ່າ ໝາຍເຖິງ ການເຮັດວຽກທີ່ຫຼາຍຊົ່ວໂມງກວ່າ ເພື່ອສຳເລັດວຽກແຕ່ຜົນໄດ້ຮັບໜ້ອຍ ແລະ ຊໍ້າບໍ່ໜຳກໍ່ຍັງມີຄວາມສ່ຽງຕໍ່ສຸຂະພາບອີກດ້ວຍ. ຜະລິດຕະພາບແຮງງານຕໍ່າ ຍັງເກີດຈາກຫຼາຍປັດໄຈ ເຊັ່ນ: ຄ່າແຮງຕໍ່າ ຊຶ່ງບໍ່ກະຕຸກຊຸກຍູ້ໃຫ້ກຳມະກອນເຮັດວຽກຫຼາຍຂຶ້ນ ແລະ ຍັງເຮັດໃຫ້ເປັນການຍາກທີ່ບໍລິສັດດຶງດູດ ຫຼື ຮັກສາກຳມະກອນມີສີມື. ມັນຍັງມີສາຍເຫດຈາກ ສີມືແຮງງານຕໍ່າ ແລະ ການສຶກສາຂອງກຳມະກອນ ຍ້ອນບໍລິສັດສ່ວນໃຫຍ່ ບໍ່ໄດ້ຝຶກອົບຮົມສີມືແຮງງານ ຫຼື ດ້ານເຕັກນິກໃຫ້ແກ່ພະນັກງານ.

ອີກສາເຫດໜຶ່ງ ທີ່ເຮັດໃຫ້ຜະລິດຕະພາບຂອງອຸດສາຫະກຳຕັດຫຍິບລາວຕໍ່າ ແມ່ນຍ້ອນມີອັດຕາອອກວຽກທີ່ສູງ. ອັດຕາອອກວຽກສະເລ່ຍ ໃນບໍລິສັດຕັດຫຍິບລາວ ແມ່ນປະມານ 40-60% ຕໍ່ປີ. ອັດຕາດັ່ງກ່າວ ລວມເອົາ ການ ອອກວຽກແບບ "ຊົ່ວຄາວ" ແລະ "ຖາວອນ". ການອອກວຽກແບບ "ຊົ່ວຄາວ" ມີສາເຫດຈາກອັດຕາສ່ວນຂອງກຳມະກອນຕາມລະດູການ; ສິ່ງຈູງໃຈ ແລະ ຂໍ້ສະເໜີຕ່າງໆ; ແລະ ການບໍ່ມີສັນຍາຈ້າງ. ການອອກວຽກແບບຖາວອນທີ່ສູງ ແມ່ນເກີດຈາກ ຄ່າແຮງຕໍ່າ; ກຳມະກອນ ບໍ່ຄຸ້ນເຄີຍກັບວຽກຕັດຫຍິບທີ່ເປັນຕາເບື່ອ ແລະ ຊໍ້າຊາກ; ແລະ ທັດສະນະຕໍ່ອຸດສາຫະກຳຕັດຫຍິບວ່າເປັນ ອາຊີບຊົ່ວຄາວ.

ຜະລິດຕະພາບຂອງທຶນຕໍ່າ ກໍ່ຖືວ່າເປັນບັນຫາທີ່ຫຼຸດຜ່ອນຄວາມສາມາດແຂ່ງຂັນ ຂອງເຄື່ອງຕັດຫຍິບສົ່ງອອກລາວ. ໂຮງງານຫຼາຍແຫ່ງໃຊ້ເຄື່ອງຈັກມືສອງທີ່ນຳເຂົ້າຈາກໄທ ຫຼື ປະເທດອື່ນໆ. ການຂາດທຶນຮອນ, ການເຂົ້າເຖິງຕະຫຼາດສິນເຊື່ອ, ແລະ ພຶດຕິກຳບໍ່ກ້າສ່ຽງ ແມ່ນບັນດາເຫດຜົນທັງໝົດ ທີ່ເຮັດໃຫ້ບໍລິສັດອາດລັງເລໃຈ ທີ່ຈະລົງທຶນຕໍ່ເຕັກໂນໂລຊີໃໝ່ໆ.

ດັ່ງນັ້ນ, ລະດັບຜະລິດຕະພາບແຮງງານ ແລະເງິນທຶນທີ່ຕໍ່າຈຶ່ງລົບລ້າງຂໍ້ໄດ້ປຽບໃນຄວາມສາມາດແຂ່ງຂັນດ້ານ ຕົ້ນທຶນແຮງງານທີ່ຕໍ່າໂດຍສ່ວນໃຫຍ່.

*ເວລາຈັດສົ່ງ:* ເວລາຈັດສົ່ງທີ່ສັ້ນ ຖືວ່າຈຳເປັນຕໍ່ ເຄື່ອງຕັດຫຍິບທີ່ "ປ່ຽນແປງຕາມລະດູການ" ຫຼື ຕາມແຟຊັນ. ຜົນການສຳຫຼວດ ສະແດງໃຫ້ເຫັນວ່າ ເວລາຈັດສົ່ງ ໃນ ສປປ ລາວ ແມ່ນສູງກວ່າຂອງປະເທດຄູ່ແຂ່ງຂັນຫຼາຍ. ໃນ ສປປ ລາວ, ໄລຍະເວລາ ນັບຈາກມື້ສັ່ງຊື້ ຫາ ການຂົນສົ່ງສິນຄ້າສຳເລັດຮູບ ໄປຍັງຕະຫຼາດສຳຄັນ ແມ່ນປະມານ 70 ວັນ ໂດຍສະເລ່ຍ ໃນຂະນະທີ່ໄລຍະເວລາມາດຕະຖານ ແມ່ນ 30-45 ວັນ. ເຖິງແນວໃດກໍ່ຕາມ, ໄລຍະເວລາສະເລ່ຍຂອງລາວ ຍັງຖືວ່າ ສັ້ນກວ່າຂອງກຳປູເຈຍ ແລະ ບັງກະລາເທດ ຊຶ່ງມີເວລາຈັດສົ່ງ ຢູ່ລະຫວ່າງ 90-120 ວັນ.

ເວລາຈັດສົ່ງທີ່ດົນຂອງເຄື່ອງຕັດຫຍິບສົ່ງອອກຂອງລາວ ມີສາເຫດມາຈາກ 3 ປັດໄຈ ຄື: ການຂົນສົ່ງ ແລະ ໄລຍະທາງຈາກຕະຫຼາດສຳຄັນ; ການຂາດອຸດສາຫະກຳຕໍ່ເນື່ອງ; ແລະ ສິ່ງອຳນວຍຄວາມສະດວກທາງບົກທີ່ບໍ່ພຽງພໍ.

## ຍຸດທະສາດເພື່ອຍົກລະດັບຄວາມສາມາດແຂ່ງຂັນ ໃນການຜະລິດ ແລະ ການສົ່ງອອກ

ການລົບລ້າງໂກຕາ ໂດຍທົ່ວໄປແລ້ວ ໝາຍເຖິງການແຂ່ງຂັນທີ່ສູງຂຶ້ນ ສຳລັບ ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ. ເພື່ອຮັກສາ ຫຼື ຂະຫຍາຍຄວາມໄດ້ປຽບໃນການແຂ່ງຂັນ, ຜູ້ຜະລິດຈຳເປັນຕ້ອງ ຫັນປ່ຽນຮູບແບບການຜະລິດຈາກ ການປະກອບແບບງ່າຍດາຍ ສູ່ການຜະລິດ "ແບບຄົບຊຸດ". ຂົງເຂດນະໂຍບາຍທີ່ສຳຄັນ ໃນທີ່ນີ້ ລວມທັງ ການຄົ້ນຄວ້າຫາຜະລິດຕະພັນ ແລະ ຕະຫຼາດຊ່ອງວ່າງ; ການຝຶກອົບຮົມສີມືແຮງງານ ແລະ ການຍົກລະດັບເຕັກໂນໂລຊີ; ການລົງທຶນໃນເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການປັບປຸງພື້ນຖານໂຄງລ່າງ ເຊັ່ນ: ທ່າເຮືອ ແລະ ເຂດການຜະລິດເພື່ອສົ່ງອອກ.

ຫຼາຍບໍລິສັດໃນ ສປປ ລາວ ພະຍາຍາມຍົກລະດັບຄວາມສາມາດໃນການແຂ່ງຂັນ ໂດຍນຳໃຊ້ຫຼາຍມາດຕະການ ເພື່ອແກ້ໄຂບັນຫາດັ່ງກ່າວ. ບໍລິສັດລົງທຶນລາວ ສ່ວນໃຫຍ່ (64%) ຕັ້ງໃຈຈະວາງຍຸດທະສາດໃໝ່ວ່າ ຈະເພີ່ມຄ່າແຮງໃຫ້ກຳມະກອນທີ່ມີສີມື, ດຸໝັ່ນຂະຫຍັນພຽນ ແລະ ມີຜະລິດຕະພາບ ພ້ອມທັງ ຜະລິດສິນຄ້າໃຫ້ຫຼາກ ຫຼາຍ.

ບໍລິສັດລົງທຶນລາວ (65%) ແລະ ຮ່ວມທຶນ (68%) ໄດ້ຄິດເຖິງການຜະລິດສິນຄ້າໃຫ້ຫຼາກຫຼາຍ ແຕ່ເປັນໜ້າປະ ຫຼາດໃຈ ທີ່ມີພຽງແຕ່ 38% ຂອງບໍລິສັດລົງທຶນຕ່າງປະເທດ ກ່າວວ່າ ນີ້ແມ່ນຍຸດທະສາດທີ່ຕັ້ງໃຈຈະວາງໃໝ່. ໃນຂະນະທີ່ການຜະລິດສິນຄ້າໃຫ້ຫຼາກຫຼາຍ ສາມາດສ້າງລາຍຮັບທີ່ຫຼາຍຂຶ້ນ ໂດຍການຂະຫຍາຍໂອກາດໄປຍັງຕະ ຫຼາດໃໝ່ ແຕ່ກໍ່ມີກໍລະນີດ້ານໜຶ່ງວ່າ ການຜະລິດພຽງແຕ່ສິນຄ້າບາງລາຍການ ສາມາດເພີ່ມລະດັບຄວາມຊຳນານສະເພາະດ້ານ ຊຶ່ງຕໍ່ມາ ຈະນຳໄປສູ່ການຍົກລະດັບ



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

ຜະລິດຕະພາບ ແລະ ຄຸນນະພາບ. ນອກຈາກນີ້, ເຄື່ອງຈັກທີ່ຕິດຕັ້ງແລ້ວບາງຢ່າງ ພຽງແຕ່ນຳໃຊ້ສຳລັບການຜະລິດສິນຄ້າທີ່ຄ້າຍຄືກັນ, ດັ່ງນັ້ນ ການຜະລິດໃຫ້ມີຄວາມຫຼາກ ຫຼາຍ ອາດຕ້ອງການການລົງທຶນເພີ່ມຕື່ມ.

ອັດຕາສ່ວນທີ່ຂ້ອນຂ້າງສູງຂອງຜູ້ຕອບການສຳຫຼວດ ທີ່ເປັນບໍລິສັດລົງທຶນລາວ, ລົງທຶນຕ່າງປະເທດ ແລະ ຮ່ວມທຶນທັງໝົດ ໄດ້ສະແດງຄວາມມຸ່ງຫວັງທີ່ປັບປຸງຕົນເອງ ແລະ ເພື່ອປະຕິບັດຕາມເງື່ອນໄຂມາດຕະຖານດ້ານໂຮງງານ ແລະ ສັງຄົມ. ຜູ້ຈັດການຫຼາຍທ່ານ ໄດ້ລາຍງານວ່າ ກ່ອນທີ່ລູກຄ້າ ຈະສັ່ງຊື້, ເຂົາເຈົ້າມາກວດກາສະພາບ ໂຮງງານ, ສິດທິຂອງແຮງງານ, ແລະ ກົດລະບຽບດ້ານສຸຂະພາບ ແລະ ຄວາມປອດໄພ. ຖ້າບໍ່ປະຕິບັດໄດ້ເງື່ອນໄຂດັ່ງກ່າວ, ເຂົາເຈົ້າອາດບໍ່ສັ່ງຊື້. ດັ່ງນັ້ນ, ຈຶ່ງມີຄວາມພະຍາຍາມໃນການຍົກລະດັບມາດຕະຖານດ້ານສຸຂະພາບ ແລະ ຄວາມປອດໄພ ແລະ ສິດທິຂອງແຮງງານ ເພື່ອຈຸດປະສົງໃນການເພີ່ມທະວີຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກລູກຄ້າ.

ເມື່ອສົມທຽບກັບບໍລິສັດລົງທຶນພາຍໃນ ແລະ ຮ່ວມທຶນ, 60% ຂອງບໍລິສັດລົງທຶນຕ່າງປະເທດ ຄິດທີ່ຈະເພີ່ມການລົງທຶນດ້ານເງິນທຶນ ເພື່ອເພີ່ມລະດັບຜົນຜະລິດ. ນີ້ແມ່ນສອດຄ່ອງກັບທັດສະນະທາງບວກ ຂອງຫຼາຍບໍລິສັດລົງທຶນຕ່າງປະເທດ ໃນດ້ານການຜະລິດ, ການນຳເຂົ້າວັດຖຸດິບ ແລະ ເຄື່ອງຈັກ ແລະ ການສົ່ງອອກໄປຍັງສະຫະ ພາບເອີລົບ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ. ເຖິງແນວໃດກໍ່ຕາມ, ມີອັດຕາສ່ວນທີ່ຕ່ຳກວ່າຂອງບໍລິສັດຮ່ວມທຶນ ແລະ ລາວ ທີ່ຕັ້ງໃຈຈະນຳໃຊ້ຍຸດທະສາດນີ້. ນີ້ແມ່ນມີສາເຫດມາຈາກ ການຂາດຄວາມເຊື່ອໝັ້ນ ຕໍ່ປະສິດທິພາບການສົ່ງອອກຂອງຕົນ ໃນຍຸກສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ແລະ ຂໍ້ຈຳກັດດ້ານເງິນທຶນ.

## ຄວາມສຳຄັນຂອງການລຶບລ້າງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ແລະ ການຍົກເລີກມາດຕະການປົກປ້ອງຊົ່ວຄາວ ຕໍ່ຈີນ ໃນປີ 2008

ຜົນການສຳຫຼວດ ສະແດງໃຫ້ເຫັນວ່າ ຜົນກະທົບທາງລົບທີ່ຄາດກະໄວ້ ຕໍ່ກັບປະເທດດ້ອຍພັດທະນາທີ່ນ້ອຍ ຈາກການລຶບລ້າງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ແມ່ນຍັງບໍ່ທັນຮູ້ສຶກໄດ້ເທື່ອໃນ ສປປ ລາວ ຊຶ່ງສະແດງອອກໃນການເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງລາຍຮັບຈາກການສົ່ງອອກ ແລະ ການຈ້າງງານ. ບໍລິສັດລົງທຶນຕ່າງປະເທດ ແລະ ຮ່ວມທຶນ ມີທັດສະນະຄືກັນວ່າ ການສິ້ນສຸດຂອງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ສ້າງຜົນປະໂຫຍດໃນຂະນະທີ່ ບໍລິສັດລົງທຶນລາວ ສ່ວນໃຫຍ່ ບໍ່ເຫັນດີນຳ. ຜູ້ຈັດການສ່ວນໃຫຍ່ ມີທັດສະນະທາງລົບ ກ່ຽວກັບ ການຍົກເລີກການໄກປົກປ້ອງຊົ່ວຄາວ ທີ່ມີຕໍ່ຈີນ ຈົນເຖິງປີ 2008.

*ການແຂ່ງຂັນກັບຜູ້ສະໜອງຕ່າງປະເທດ:* ຜູ້ຕອບການສຳຫຼວດສ່ວນໃຫຍ່ (76%) ໄດ້ປະເຊີນກັບການແຂ່ງຂັນທີ່ເພີ່ມຂຶ້ນ ຈາກຜູ້ສະໜອງຕ່າງປະເທດ ຜູ້ທີ່ມີສາຍການຜະລິດທີ່ຄືບວົງຈອນກວ່າ, ການປະຢັດຈາກຂະໜາດການຜະລິດ ແລະ ຄວາມໃກ້ກວ່າກັບຕະຫຼາດສຳຄັນ. ຜູ້ແຂ່ງຂັນເຫຼົ່ານັ້ນ ແມ່ນຈີນ, ຮົງກົງ (ຈີນ), ຫວຽດນາມ, ບັງກະ ລາເທດ, ສີລັງກາ, ໄທ, ກຳປູເຈຍ, ອິນເດຍ, ອາເມລິກາໃຕ້ (ເຊັ່ນ ແມັກຊິກໂກ), ແລະ ເອີລົບຕາເວັນອອກ (ເຊັ່ນ ເຊັກໂກ, ໂຣມາເນຍ ແລະ ໂປໂລຍ). ຜູ້ຈັດການ ແລະ ເຈົ້າຂອງໂຮງງານຕັດຫຍິບ ຄາດວ່າຈະມີການແຂ່ງຂັນທີ່ເພີ່ມສູງຂຶ້ນຈາກຜູ້ສະໜອງຈາກຕ່າງປະເທດ ໂດຍສະເພາະ ຈີນ ພາຍຫຼັງທີ່ມີການຍົກເລີກມາດຕະການປົກປ້ອງຊົ່ວຄາວ ໃນປີ 2008.

*ລາຄາສົ່ງອອກໂລກ:* ຫຼາຍກວ່າເຄິ່ງໜຶ່ງຂອງບໍລິສັດທີ່ໄດ້ຮັບການສຳພາດ ໄດ້ກ່າວວ່າ ລາຄາສົ່ງອອກສຳລັບສິນຄ້າຂອງເຂົາເຈົ້າໄດ້ຫຼຸດລົງ ນັບແຕ່ປີ 2005 ເປັນຕົ້ນມາ. ແນວໂນ້ມນີ້ ຕົ້ນຕໍແລ້ວແມ່ນປະເຊີນໂດຍບໍລິສັດລົງທຶນຕ່າງປະເທດ ແລະ ລາວ. ນີ້ແມ່ນບໍ່ສອດຄ່ອງກັບລາຄາເຄື່ອງຕັດຫຍິບ ໂລກທີ່ມີຄວາມໝັ້ນທ່ຽງ ອີງຕາມການລາຍງານຂອງ ທະນາຄານພັດທະນາອາຊີ (2006). ສະຖິຕິການຄ້າ ຍັງສະແດງໃຫ້ເຫັນວ່າ ມູນຄ່າການສົ່ງອອກຂອງລາວໂດຍລວມ ໄດ້ເພີ່ມຂຶ້ນ ໂດຍສະເພາະນັບແຕ່ປີ 2004 ເປັນຕົ້ນມາ. ນີ້ແມ່ນອາດມີສາຍເຫດມາຈາກ ການເພີ່ມຂຶ້ນຂອງລາຄາ ຫຼື ການເພີ່ມຂຶ້ນຂອງບໍລິມາດການສົ່ງອອກ. ປະມານ 40% ຂອງບໍລິສັດທີ່ຖືກສຳພາດ ຄາດວ່າ ລາຄາສົ່ງອອກເຄື່ອງຕັດຫຍິບ ຈະຫຼຸດລົງ ພາຍຫຼັງທີ່ມີການຍົກເລີກມາດຕະການປົກປ້ອງຊົ່ວຄາວ ຕໍ່ຈີນ ໃນປີ 2008.

*ການສົ່ງອອກໄປຍັງຕະຫຼາດສຳຄັນ:* ປະກົດວ່າບໍ່ມີມະຕິເອກະສັນໃນບັນດາບໍລິສັດ ກ່ຽວກັບບັນຫານີ້ ຈາກການລຶບລ້າງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ. ຜົນການສຳຫຼວດ ສະແດງໃຫ້ເຫັນວ່າ 34% ຂອງບໍລິສັດ ໄດ້ສົ່ງອອກໄປສະຫະພາບເອີລົບເພີ່ມຂຶ້ນ ໃນຂະນະທີ່ອັດຕາສ່ວນທີ່ເທົ່າທຽມກັນ ປະສົບການຍອດສົ່ງອອກທີ່ຫຼຸດລົງ. ບໍລິສັດລົງທຶນຕ່າງປະເທດ ທີ່ມີເຄືອຂ່າຍສາກົນ ແລະ ການເຂົ້າເຖິງຕະຫຼາດທີ່ເຂັ້ມແຂງ ມີທັດສະນະທາງບວກ ແຕ່ບໍລິສັດລາວ ມີທັດສະນະທາງລົບຫຼາຍກວ່າ ຕໍ່ກັບບັນຫານີ້. 44% ຂອງບໍລິສັດທີ່ໄດ້ຮັບການສຳຫຼວດ ຄາດວ່າ ຈະມີການຫຼຸດລົງຂອງລາຄາສົ່ງອອກເຄື່ອງຕັດຫຍິບ ແລະ ຄາດວ່າອັດຕາສ່ວນຂອງການສົ່ງອອກເຄື່ອງນຸ່ງຫົ່ມລາວໃນຕະຫຼາດໂລກ ຈະຫຼຸດລົງ ໂດຍສະເພາະ ໃນສະຫະພາບເອີລົບ ພາຍຫຼັງມາດຕະການປົກປ້ອງຊົ່ວຄາວ ຖືກຍົກເລີກໃນປີ 2008.

*ການຈ້າງງານ:* ການປ່ຽນແປງຂອງການຈ້າງງານ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ແຕກຕ່າງກັນ ໃນບັນດາບໍລິສັດລົງທຶນຮູບແບບຕ່າງໆ. 45% ຂອງຜູ້ຕອບການສຳຫຼວດກ່າວວ່າ ການຈ້າງງານເພີ່ມຂຶ້ນ ພາຍຫຼັງການສິ້ນສຸດຂອງສັນຍາແຜນແພ ແລະ ເຄື່ອງນຸ່ງຫົ່ມ, 24% ບອກວ່າມີການຈ້າງງານຫຼຸດລົງ ແລະ 28% ບໍ່ປະເຊີນກັບການປ່ຽນແປງລະດັບການຈ້າງງານໃດໆ. ພາຍຫຼັງທີ່ມີການຍົກເລີກມາດຕະການປົກປ້ອງຊົ່ວຄາວ ໃນປີ 2008, 33% ຂອງຜູ້ຕອບການສຳຫຼວດ ຄາດວ່າການຈ້າງງານ ຈະຍັງຄົງບໍ່ປ່ຽນແປງ ໃນຂະນະທີ່ 27% ເຫັນວ່າຈະຫຼຸດລົງ ແລະ ອີກ 30% ບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ.

*ການນຳເຂົ້າສິນຄ້າທຶນ ແລະ ວັດຖຸດິບ:* ປະມານ 44% ຂອງບໍລິສັດລົງທຶນຕ່າງປະເທດ ກ່າວວ່າ ການລຶບລ້າງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ເຮັດໃຫ້ມີການນຳເຂົ້າວັດຖຸດິບຫຼາຍຂຶ້ນ ແລະ 38% ອ້າງເຖິງການເພີ່ມຂຶ້ນຂອງການນຳເຂົ້າສິນຄ້າທຶນ. ບໍລິສັດລົງທຶນຕ່າງປະເທດມີເງື່ອນໄຂດີຂຶ້ນ ພາຍຫຼັງການລຶບລ້າງໂກຕາ ແລະ ນີ້ແມ່ນມີການລຶບລ້າງສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ບໍລິສັດລົງທຶນຕ່າງປະເທດ ໄດ້ຮັກສາ ຫຼື ເພີ່ມການສົ່ງອອກຂອງເຂົາເຈົ້າ ດັ່ງນັ້ນ ຈຶ່ງກະຕຸ້ນຄວາມຕ້ອງການຕໍ່ການນຳເຂົ້າທີ່ເພີ່ມຂຶ້ນ.

ໃນອີກດ້ານໜຶ່ງ, 44% ແລະ 33% ຂອງບໍລິສັດລາວ ຮູ້ສຶກວ່າມີການຫຼຸດລົງໃນການນຳເຂົ້າວັດຖຸດິບ ແລະ ສິນຄ້າທຶນ ຕາມລຳດັບ. ນີ້ສະແດງໃຫ້ເຫັນວ່າ ພາຍໃຕ້ສະພາບການທີ່ປາດສະຈາກໂກຕາ, ບໍລິສັດລົງທຶນລາວ ມີແນວໂນ້ມທີ່ຈະຂະຫຍາຍໂຮງງານການຜະລິດຂອງເຂົາເຈົ້າ, ແລະ ບາງບໍລິສັດອາດຖືກບີບຮັດໃຫ້ຫຼຸດຂະໜາດຂອງທຸລະກິດຂອງເຂົາເຈົ້າ. ພາຍຫຼັງທີ່ລຶບລ້າງມາດຕະການປົກປ້ອງຊົ່ວຄາວ, 29% ແລະ 31% ຂອງຜູ້ຕອບການສຳຫຼວດ ຄາດວ່າ ການນຳເຂົ້າສິນຄ້າທຶນ ແລະ ວັດຖຸດິບ ຈະຫຼຸດລົງ ຕາມລຳດັບ.

*ຜະລິດຕະພາບຂອງກຳມະກອນ:* ໃນໄລຍະສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ຜະລິດຕະພາບແຮງງານ ຈຳເປັນຕ້ອງໄດ້ເພີ່ມຂຶ້ນຕາມຈັງຫວະການແຂ່ງຂັນທີ່ຫຼາຍຂຶ້ນ. ມີຄວາມເຂົ້າໃຈທີ່ຄືກັນໃນບັນດາໂຮງງານທີ່ຖືກສຳຫຼວດ ກ່ຽວກັບຄວາມຈຳເປັນຕົ້ນຕໍ ໃນການເພີ່ມຜະລິດຕະພາບແຮງງານ ເພື່ອກະກຽມຮັບມືກັບການສິ້ນສຸດຂອງມາດຕະການປົກປ້ອງຊົ່ວຄາວ ຕໍ່ຈີນ ໃນປີ 2008. ຜູ້ຕອບການສຳຫຼວດສ່ວນໃຫຍ່ ເຫັນວ່າ ມີການເພີ່ມຂຶ້ນຂອງຜະລິດຕະພາບແຮງງານ ໃນຂະນະທີ່ 41% ລາຍງານວ່າຜະລິດຕະພາບຂອງແຮງງານ ບໍ່ປ່ຽນແປງ.

## ການປະເມີນຜົນກະທົບຈາກສະຖານະການທີ່ປາດສະຈາກພາສີໃນອາເມລິກາ ແລະ ສະຫະພາບເອີລົບ

### ຜົນກະທົບທີ່ເປັນໄປໄດ້ຂອງການບໍ່ມີພາສີໃນອາເມລິກາ

ກ່ອນຈະໄດ້ຮັບການປະຕິບັດສາຍພົວພັນການຄ້າແບບປົກກະຕິ (NTR) ຈາກອາເມລິກາ, ສິນຄ້າສົ່ງອອກຂອງສປປ ລາວ ໄດ້ປະເຊີນກັບອັດຕາພາສີສູງຫຼາຍ ຕະຫຼາດອາເມລິກາ. ການປະຕິບັດສາຍພົວພັນການຄ້າແບບປົກກະຕິ ມີຜົນສັກສິດໃນທ້າຍປີ 2004 ແຕ່ວ່າການຈັດຕັ້ງປະຕິບັດຕົວຈິງແມ່ນເລີ່ມຕົ້ນໃນເດືອນກຸມພາ ປີ 2005. ເຖິງແນວໃດກໍ່ຕາມ, ພາຍຫຼັງສາຍພົວພັນການຄ້າແບບປົກກະຕິ, ການສົ່ງອອກເຄື່ອງຕັດຫຍິບໄປຍັງອາເມລິກາ ເພີ່ມຂຶ້ນພຽງແຕ່ໜ້ອຍດຽວ ໂດຍແມ່ນເກືອບ 1%. ດັ່ງນັ້ນ, ສະມາຄົມອຸດສາຫະກຳຕັດຫຍິບລາວ ໂດຍຮ່ວມມືຢ່າງໃກ້ຊິດກັບບັນດາປະເທດດ້ອຍພັດທະນາໃນອາຊີ ແລະ ປະເທດດ້ອຍພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລ ໄດ້ເລີ່ມຕົ້ນເຈລະຈາຂໍສິດທິພິເສດຈາກອາເມລິກາ. ຖ້າປະສົບຜົນສຳເລັດ, ສປປ ລາວ ຈະສາມາດສົ່ງອອກສິນຄ້າ 4,650 ລາຍການ ໄປຍັງອາເມລິກາ ໂດຍປາສະຈາກພາສີ .

ສົມມຸດວ່າ ສປປ ລາວ ໄດ້ຮັບສິດທິພິເສດເຕັມທີ່ຈາກອາເມລິກາ, ຈະຖືວ່າບໍ່ມີການກຳນົດໂກຕາ ຫຼື ມາດຕະການພາສີ ຕໍ່ສິນຄ້ານຳເຂົ້າຈາກລາວ. ຜົນການຄິດໄລ່ຈາກສະຖານະການນີ້ແມ່ນ ຈະເຮັດໃຫ້ລາຍຮັບສົ່ງອອກ ແລະ ການຈ້າງງານ. ຖ້າ ສປປ ລາວ ໄດ້ຮັບສິດທິພິເສດເຕັມທີ່ຈາກອາເມລິກາ, ຄາດວ່າມູນຄ່າການສົ່ງອອກ ອາດເພີ່ມຂຶ້ນ 6.3 ລ້ານໂດລາອາເມລິກາ ແລະ ຈຳນວນກຳມະກອນຕັດຫຍິບ ອາດເພີ່ມຂຶ້ນເປັນ 35,280 ຄົນ, ເພີ່ມຂຶ້ນ 31% ຈາກລະດັບໃນປີ 2005.

ຖ້າມີການໃຫ້ສິດທິພິເສດຈາກອາເມລິກາ, ຜູ້ສົ່ງອອກເຄື່ອງຕັດຫຍິບລາວ ຈະສາມາດສົ່ງອອກສິນຄ້າໄປຍັງຫຼາຍ ຕະຫຼາດຂຶ້ນ ແລະ ຫຼຸດຜ່ອນການກະຈຸກຕົວຢູ່ແຕ່ກັບຕະຫຼາດສະຫະພາບເອີລົບ. ເຖິງຢ່າງໃດກໍ່ຕາມ, ເພື່ອເຮັດໃຫ້ທ່າແຮງໃນການເພີ່ມລາຍຮັບການສົ່ງອອກ ແລະ ການຈ້າງງານ, ມີຄວາມຈຳເປັນທີ່ຈະແກ້ໄຂຂໍ້ຈຳກັດດ້ານອຸປະສົງ ແລະ ອຸປະທານ ທີ່ກຳລັງເປັນອຸປະສັກຕໍ່ການສົ່ງອອກເຄື່ອງຕັດຫຍິບລາວ.



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

## ຜົນກະທົບທີ່ເປັນທ່າແຮງຈາກການສົ່ງອອກໄປຍັງຕະຫຼາດອາເມລິກາທີ່ມີການລົບລ້າງພາສີ(ອີງຕາມຕົວເລກປີ 2005)

| ຄວາມ ຢືດຢຸ່ນຂອງ ອຸປະສົງ | ຄວາມ ຢືດຢຸ່ນຂອງ ອຸປະທານ | ສະຖານະ ການພື້ນ ຖານ-ລາຍ ຮັບສົ່ງອອກ (ລ້ານ US$) | ການເພີ່ມຂຶ້ນ ຂອງລາຍຮັບ ສົ່ງອອກ (ລ້ານ US$) | ການ ເພີ່ມຂຶ້ນ ເປັນ % | ສະຖານະ ການພື້ນ ຖານ-ການ ຈ້າງງານ (ຄົນ) | ການເພີ່ມ ຂຶ້ນຂອງ ການຈ້າງ ງານ | ການຈ້າງ ງານຄາດ ຄະເນ ລວມ | ການ ເພີ່ມ ຂຶ້ນເປັນ % |
|---:|---:|---:|---:|---:|---:|---:|---:|---:|
| 0.5 | 0.5 | 143 | 6.32 | 4 | 27,000 | 7,814 | 34,814 | 29 |
| 0.5 | 1 | 143 | 14.33 | 10 | 27,000 | 9,683 | 36,683 | 36 |
| 1 | 0.5 | 143 | 38.68 | 27 | 27,000 | 15,358 | 42,358 | 57 |
| 1 | 1 | 143 | 13.15 | 9 | 27,000 | 9,408 | 36,408 | 35 |
| 1 | 2 | 143 | 10.41 | 7 | 27,000 | 8,769 | 35,769 | 32 |

### ຜົນກະທົບທີ່ເປັນທ່າແຮງ ຂອງການສົ່ງອອກຂອງລາວ ຈາກ ລະບຽບແຫຼ່ງກຳເນີດສິນຄ້າທີ່ໂຍະຍານຂອງສະຫະພາບເອີລົບ

ໂດຍຄ້າຍຄືກັບປະເທດດ້ອຍພັດທະນາອື່ນໆ, ສປປ ລາວ ໄດ້ຮັບຜົນປະໂຫຍດຈາກເງື່ອນໄຂການສົ່ງອອກ ແບບປາສະຈາກພາສີ ແລະ ໂກຕາ ພາຍໃຕ້ຂໍ້ລິເລີ່ມ ທຸກສິນຄ້າຍົກເວັ້ນອາວຸດ (EBA) ຊຶ່ງປະຕິບັດຕໍ່ປະເທດດ້ອຍພັດ ທະນາ 48 ປະເທດ ນັບແຕ່ວັນທີ 5/1/2001 ເປັນຕົ້ນມາ. ຍ້ອນແນວນີ້, ການສົ່ງອອກເຄື່ອງຕັດຫຍິບລາວສ່ວນໃຫຍ່ຈຶ່ງຍັງກະຈຸກຕົວຢູ່ກັບແຕ່ສະຫະພາບເອີລົບ. ເຖິງຢ່າງໃດກໍ່ຕາມ, ເພື່ອໄດ້ຮັບສິດທິພິເສດພາຍໃຕ້ຂໍ້ລິເລີ່ມດັ່ງກ່າວ, ການສົ່ງອອກເຄື່ອງຕັດຫຍິບລາວ ແມ່ນປະຕິບັດຕາມລະບຽບການແຫຼ່ງກຳເນີດສິນຄ້າ. ເຖິງແມ່ນວ່າ ສປປ ລາວ ໄດ້ຮັບການໂຍະຍານໃນການນຳເຂົ້າວັດຖຸດິບຈາກອາຊຽນ ໃນການສົ່ງອອກໄປສະຫະພາບເອີລົບ, 42% ຂອງວັດຖຸດິບທີ່ນຳເຂົ້າຈາກປະເທດອື່ນ ແມ່ນບໍ່ກວມໃນເງື່ອນໄຂລະບຽບແຫຼ່ງກຳເນີດສິນຄ້າຂອງສະຫະພາບເອີລົບ.

ສະມາຄົມອຸດສາຫະກຳຕັດຫຍິບລາວ ຄາດຄະເນວ່າ ການສົ່ງອອກເຄື່ອງຕັດຫຍິບລາວ ໄປຍັງຕະຫຼາດ ສະຫະ ພາບເອີລົບ ຈະຍັງຄົງສືບຕໍ່ເພີ່ມຂຶ້ນໃນອັດຕາເກົ່າ ປະມານ 10% ຕໍ່ປີ ແລະ ການຈ້າງການທີ່ກໍ່ຈະເພີ່ມຂຶ້ນໃນອັດຕາ 10% ຕໍ່ປີ. ອີງຕາມປະສິດທິພາບຂອງອຸດສາຫະກຳຕັດຫຍິບລາວໃນປະຈຸບັນ, ຕົວເລກຄາດຄະເນນີ້ ຖືວ່າສົມເຫດສົມຜົນ ແລະ ເປັນຈິງໄດ້.

### ມາດຕະການ ແລະ ຄຳແນະນຳທີ່ເປັນໄປໄດ້

ເພື່ອຍົກລະດັບຄວາມສາມາດແຂ່ງຂັນຂອງອຸດສາຫະກຳຕັດຫຍິບຂອງລາວ, ມາດຕະການສະເພາະ ເພື່ອແກ້ໄຂຂໍ້ຈຳກັດແມ່ນສຳຄັນຫຼາຍ. ຕົວຢ່າງ ການຂາດກຳມະກອນທີ່ມີສີມື ຍ້ອນຂາດການຝຶກອົບຮົມວິຊາຊີບ ຈະຈຳເປັນໃຫ້ຍົກສູງການຮ່ວມມື ລະຫວ່າງລັດຖະບານ ແລະ ພາກທຸລະກິດ ໂດຍດຳເນີນສູນຝຶກອົບຮົມທີ່ມີຢູ່ແລ້ວ ໂດຍປັບ ປຸງຫຼັກສູດການສິດສອນໃຫ້ສອດຄ່ອງກັບການຜະລິດເຄື່ອງຕັດຫຍິບ, ແລະ ໂດຍການໃຊ້ຜູ້ເຂົ້າຝຶກອົບຮົມໃນລະ ດັບປະຕິບັດຕົວຈິງ. ການຝຶກອົບຮົມຄວນກວມເອົາລະດັບຜູ້ບໍລິຫານ ແລະ ຜູ້ຄຸມງານ ພ້ອມທັງກົນໄກເພື່ອສົ່ງເສີມການຖ່າຍທອດເຕັກໂນໂລຊີ ຈາກຊ່ຽວຊານຕ່າງປະເທດໃຫ້ພະນັກງານທ້ອງຖິ່ນ.

ບໍລິສັດຂະໜາດນ້ອຍ ແລະ ກາງ ມັກຈະດຳເນີນດ້ວຍຕົນເອງ, ມີນະໂຍບາຍຄວາມສ່ຽງໃນຕະຫຼາດທີ່ແຂ່ງຂັນເພີ່ມຂຶ້ນ, ແລະ ທີມງານຊີ້ໃຫ້ເຫັນເຖິງເຄືອຂ່າຍທີ່ເຂັ້ມແຂງຂຶ້ນພາຍໃນ ອຸດສາຫະກຳຕັດຫຍິບ ທີ່ມີບໍລິສັດໃຫຍ່ຂຶ້ນ, ສະມາຄົມຕັດຫຍິບ ແລະ ລັດຖະບານຄວນພັດທະນາກົນໄກ ເພື່ອຊ່ວຍເຫຼືອບໍລິສັດຂະໜາດນ້ອຍ ແລະ ກາງໃນຂະແໜງນີ້.

ສຳລັບ ມາດຕະຖານສັງຄົມ (ແຮງງານ ແລະ ສິ່ງແວດລ້ອມ), ວິສາຫະກິດ ຄວນໄດ້ຮັບການສະໜັບສະໜູນໃຫ້ສອດຄ່ອງມາດຕະຖານ ດັ່ງທີ່ກ່າວໃນກົດໝາຍ ແລະ ເງື່ອນໄຂແຮງງານ ຈາກລູກຄ້າສາກົນ. ເຖິງແນວໃດກໍ່ຕາມ, ບໍລິສັດນ້ອຍ ທີ່ບໍ່ດຳເນີນພາຍໃນເງື່ອນໄຂເຫຼົ່ານີ້ ຄວນປະສານນະໂຍບາຍຂອງເຂົາເຈົ້າ ໃຫ້ແກ່ລູກຄ້າທີ່ເຄັ່ງຄັດໜ້ອຍກວ່າ. ຄວນມີຄຳແນະນຳ ແລະ ມາດຕະການຂອງອຸດສາຫະກຳ ເພື່ອຄ່ອຍໆຮັບມືກັບເງື່ອນໄຂມາດຕະ ຖານ. ມາດຕະການອື່ນໆ ກ່ຽວພັນກັບການສ້າງຄວາມເຂັ້ມແຂງໃຫ້



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

ສະຫະພັນກຳມະບານ, ການໃຊ້ອຸປະກອນ ປອດໄພທີ່ດີຂຶ້ນ ແລະ ການປັບປຸງເງື່ອນໄຂການເຮັດວຽກອື່ນໆ.

ບໍລິສັດລົງທຶນລາວ ທີ່ປະສົບບັນຫາເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບແນວໂນ້ມ ແລະ ການປ່ຽນແປງຂອງຕະຫຼາດ ຄວນໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງອຸດສາຫະກຳການຄ້າ ແລະ ສາກົນ ແລະ ໜ່ວຍງານລັດຄວາມໄດ້ຮັບການມອບໝາຍເພື່ອສະໜອງຂໍ້ມູນຂ່າວສານ ແລະ ຖານຂໍ້ມູນການຊອກວຽກ. ຄວນນຳໃຊ້ວິທີການສື່ສານທີ່ທັນສະໄໝກວ່າ ເພື່ອເຜີຍແຜ່ຂໍ້ມູນຂ່າວສານຈາກສະມາຄົມຕັດຫຍິບ ແລະ ໜ່ວຍງານລັດທີ່ໄດ້ຮັບມອບໝາຍ.

ສຳລັບ ອຸປະສັກດ້ານການຄ້າ, ທີມງານແນະນຳວ່າ ເພື່ອບັນເທົາສະຖານະການໃນປະຈຸບັນ ຍ້ອນເງື່ອນໄຂລະ ບຽບແຫຼ່ງກຳເນີດສິນຄ້າ ແລະ ພາສີ ທີ່ຕັ້ງໂດຍອາເມລິກາ ທີ່ເປັນອຸປະສັກຕໍ່ຜູ້ສົ່ງອອກລາວ, ລັດຖະບານ ແລະ ພາກທຸລະກິດ ຄວນເຈລະຈາເພື່ອໃຫ້ຂໍໂຍະຍານລະບຽບແຫຼ່ງກຳເນີດສິນຄ້າ ແລະ ສິດທິພິເສດຈາກອາເມລິກາ ພ້ອມທັງ ຄົ້ນຄວ້າເພີ່ມຕື່ມ ກ່ຽວກັບຜົນກະທົບທີ່ເປັນໄປໄດ້ ແລະ ປະເມີນການປ່ຽນແປງທີ່ຈະມີ.

ການລົງທຶນໃນເຕັກໂນໂລຊີໃໝ່ ຄວນໄດ້ຮັບການສົ່ງເສີມ; ເຄື່ອງຈັກທີ່ຍັງບໍ່ທັນພຽງພໍໃນການຜະລິດປະຈຸບັນ ຄວນຄ່ອຍໆໄດ້ຮັບການປ່ຽນແປງ ໃຫ້ເປັນເຄື່ອງຈັກທີ່ເຮັດວຽກໄດ້ຫຼາຍໜ້າຂຶ້ນ ແລະ ບໍລິສັດທີ່ມີຄວາມສາມາດດ້ານການເງິນ ຄວນໄດ້ຮັບການສົ່ງເສີມໃຫ້ລົງທຶນໃນຂົງເຂດນີ້.

ຕໍ່ບັນຫາພື້ນຖານໂຄງລ່າງ ແລະ ການອຳນວຍຄວາມສະດວກການຄ້າ, ທີມງານຊີ້ໃຫ້ເຫັນວ່າ ເນື່ອງຈາກຕົ້ນທຶນຂົນສົ່ງຜ່ານແດນ ແລະ ການຊຳລະຢູ່ດ່ານພາສີ ຍັງຄົງສ້າງບັນຫາ ໃຫ້ຜູ້ສົ່ງອອກ ໃນຮູບການຂອງຕົ້ນທຶນຂົນສົ່ງ ແລະ ຂໍ້ຈຳກັດສູງ, ອຸດສາຫະກຳທີ່ກ່ຽວຂ້ອງ ແລະ ລັດຖະບານທີ່ຕິດພັນ ຄວາມພະຍາຍາມຊອກຫາເສັ້ນທາງຂົນສົ່ງທາງເລືອກ ແລະ ສົ່ງເສີມບັນຍາກາດການລົງທຶນທີ່ເອື້ອອຳນວຍ ຕໍ່ນັກລົງທຶນພາຍໃນ ແລະ ສາກົນ ໃນອຸດສາ ຫະກຳຂົນສົ່ງ, ລວມທັງ ຍືດເວລາການເຮັດວຽກ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດລະບຽບ ການຢ່າງເຂັ້ມງວດຢູ່ດ່ານພາສີ.

ໃນການແກ້ໄຂບັນຫາ ການສູນເສຍການຈ້າງງານທີ່ເປັນໄປໄດ້ ໃນຂະແໜງຕັດຫຍິບ, ຕ້ອງການຄວາມພະຍາ ຍາມຢ່າງຫຼວງຫຼາຍ ຈາກຜູ້ມີສ່ວນຮ່ວມ ທັງພາກລັດ ແລະ ທຸລະກິດ ເພື່ອຍົກລະດັບຄວາມສາມາດແຂ່ງຂັນຂອງອຸດສາຫະກຳຕັດຫຍິບລາວ.

ນີ້ຍັງຖືວ່າສຳຄັນ ໃນການລະບຸ ແລະ ພັດທະນາຂະແໜງອື່ນໆ ທີ່ມີຄວາມສາມາດໃນການຮອງຮັບແຮງງານ ໂດຍສະເພາະແມ່ນແມ່ຍິງ. ໃນຂະນະດຽວກັນ, ການສະໜອງຂໍ້ມູນຂ່າວສານກ່ຽວກັບຕະຫຼາດແຮງງານ ແລະ ການຈ້າງງານ ໃຫ້ແຮງງານ ແມ່ນເປັນວຽກງານຈຸດສຸມ.

ສະຫຼຸບແລ້ວ, ການຍົກລະດັບຄວາມສາມາດແຂ່ງຂັນຂອງສິນຄ້າຕັດຫຍິບສົ່ງອອກລາວ ຈະຮັກສາການຈ້າງງານ ແລະ ຮັບປະກັນຜົນປະໂຫຍດຕໍ່ການພັດທະນາມະນຸດ ຖືວ່າສຳຄັນ. ນີ້ຈະເກີດຈາກການຝຶກອົບຮົມ ແລະ ການຖ່າຍທອດສີມືດ້ານເຕັກນິກ; ການຍົກລະດັບຄວາມສາມາດການຜະລິດ; ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຕະຫຼາດ; ພື້ນຖານໂຄງລ່າງການຄຸ້ມຄອງທີ່ດີຂຶ້ນ; ການເຂົ້າເຖິງລະບົບທະນາຄານ; ລະບຽບການຂອງລັດໄດ້ຮັບການປັບປຸງ; ການສ້າງຄວາມຫຼາກຫຼາຍໃນການຜະລິດ ແລະ ຕະຫຼາດເປົ້າໝາຍ; ແລະ ການຄົ້ນຄວ້າຊອກຫາຜະລິດຕະພັນ ແລະ ຕະຫຼາດຊ່ອງວ່າງ

ການສຶກສາ “ການແກ້ໄຂຜົນກະທົບຈາກການລຶບລ້າງ ໂກຕາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ໃນ ສປປລາວ” ປະກອບດ້ວຍການສຶກສາສີ່ບົດ:

1. ການປະເມີນການພັດທະນາມະນຸດ ໃນ ສປປ ລາວ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ
2. ການສ້າງຄວາມຫຼາກຫຼາຍ ແລະ ການສ້າງມູນຄ່າເພີ່ມ
3. ການປະເມີນສະພາບແວດລ້ອມດ້ານນະໂຍບາຍການຄ້າ ແລະ ອຸດສາຫະກຳ ໃນ ສປປ ລາວ
4. ຍຸດທະ ສາດການເຈລະຈາ ການຄ້າ.



ຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່ ສູນສະຖິຕິແຫ່ງຊາດ,
ຖະໜົນ ຫຼວງພະບາງ, ນະຄອນຫຼວງວຽງຈັນ, ສປປ ລາວ
*ໂທລະສັບ: +85621 214740, 242022,*
*nscp@etllao.com*
*www.nsc.gov.la*



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.